ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

..................................................

ເຈົ້າແຂວງ

ເລກທີ.685..../ຈຂ.ບກ

ບໍ່ແກ້ວ, ວັນທີ..19/07/2019

# ຂໍ້ຕົກລົງ

## ວ່າດ້ວຍ ມາດຕະການ ປັບໃໝຕໍ່ຜູ້ລະເມີດການປູກກ້ວຍຫອມ ທີ່ບໍ່ຖືກຕ້ອງ ຕາມລະບຽບກົດໝາຍ ຂອງບັນດາບໍລິສັດ, ວິສາຫະກິດ ແລະ ບຸກຄົນ ຢູ່ພາຍໃນ ແຂວງບໍ່ແກ້ວ.

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ ເລກທີ: 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ ກົດໝາຍ ວ່າດ້ວຍ ກະສິກຳ ແລະ ປ່າໄມ້ ສະບັບເລກທີ 01/ສພຊ, ລົງວັນທີ 10 ຕຸລາ 1998.
- ອີງຕາມ ກົດໝາຍ ວ່າດ້ວຍ ທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2013.
- ອີງຕາມ ກົດໝາຍ ວ່າດ້ວຍປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18/12/2012.
- ອີງຕາມ ການສະເໜີຂອງຄະນະຮັບຜິດຊອບ ກວດກາ ການປູກກ້ວຍຫອມຢູ່ ແຂວງບໍ່ແກ້ວ.
- ອີງຕາມ ການຕົກລົງເຫັນດີຂອງກອງປະຊຸມ ເຈົ້າແຂວງ-ຮອງເຈົ້າແຂວງ ໃນຄັ້ງວັນທີ 19 ກໍລະກົດ 2019.

ເພື່ອສືບຕໍ່ຈັດຕັ້ງປະຕິບັດຂໍ້ຕົກລົງ ຂອງທ່ານເຈົ້າແຂວງ ແຂວງບໍ່ແກ້ວ ວ່າດ້ວຍ ນະໂຍບາຍສົ່ງເສີມ ແລະ ຄຸ້ມຄອງການປູກກ້ວຍຫອມ ຢູ່ແຂວງບໍ່ແກ້ວ ສະບັບເລກທີ 1831/ຈຂ.ບກ, ລົງວັນທີ 12 ພະຈິກ 2015 ແລະ ມະຕິຄຳສັ່ງຂອງລັດຖະບານວາງອອກ ໃນແຕ່ລະໄລຍະໃຫ້ໄດ້ຮັບຜົນດີກ່ວາເກົ່າ.

## ເຈົ້າແຂວງ ຕົກລົງ

**ມາດຕາ1** ເຫັນດີປະຕິບັດມາດຕະການປັບໃໝຕໍ່ຜູ້ລະເມີດການປູກກ້ວຍຫອມ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ຂອງບັນດາບໍລິສັດ, ວິສາຫະກິດ ແລະ ບຸກຄົນ ມີດັ່ງນີ້:

1) ຕໍ່ກັບບັນດາບໍລິສັດ, ວິສາຫະກິດ ແລະ ນິຕິບຸກຄົນທີ່ລົງທຶນປູກກ້ວຍຫອມ ບໍ່ມີເອກະສານອະນຸມັດທີ່ຖືກຕ້ອງຕາມລະບຽບກົດໝາຍ ເປັນຕົ້ນ: ໃບອະນຸຍາດການລົງທຶນ, ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດດ້ານກະສິກຳ ແລະ ປ່າໄມ້, ໃບທະບຽນອາກອນຕາມກົດໝາຍວ່າດ້ວຍສ່ວຍສາອາກອນ, ໃບຢັ້ງຢືນແຜນຮັບຮອງ ສິ່ງແວດລ້ອມ ຕາມກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມມາດຕາ 92 ຂອງກົດໝາຍສະບັບນີ້ ແມ່ນໃຫ້ປະຕິບັດມາດຕະການປັບໃໝ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

2) ຕໍ່ກັບບັນດາບໍລິສັດ, ວິສາຫະກິດ ແລະ ບຸກຄົນ ທີ່ປູກກ້ວຍຫອມໃສ່ເນື້ອທີ່ດິນທົ່ວໄປ, ດິນສວນ, ດິນໄຮ່ປ່າເລົ່າ ທີ່ບໍ່ໄດ້ຮັບອະນຸຍາດຈາກພາກລັດ ຖືກຕ້ອງຕາມລະບຽບກົດໝາຍ ແມ່ນໃຫ້ປັບໃໝເປັນຈຳນວນເງິນ 10.000.000 ກີບ (ສິບລ້ານກີບ) ຕໍ່ໜຶ່ງເຮັກຕາ ຕາມຂໍ້ຕົກລົງຂອງເຈົ້າແຂວງສະບັບເລກທີ1831/ຈຂ.ບກ, ລົງວັນທີ 12/11/2015 ໃນມາດຕາ III ແລ້ວສ້າງບົດບັນທຶກກ່າວເຕືອນ ພ້ອມທັງ

ກວດກາຄືນ ຕໍ່ກັບເນື້ອທີ່ດິນດັ່ງກ່າວ ໃຫ້ຖືກຕ້ອງກັບລະບຽບການ ແລະ ມະຕິຄຳສັ່ງຂອງລັດຖະບານແຕ່ລະໄລຍະ ຈຶ່ງປະກອບເອກະສານຄືນຢ່າງຄົບຖ້ວນແລ້ວສືບຕໍ່ປູກ.

3) ຕໍ່ກັບບໍລິສັດ ຫຼື ຜູ້ລົງທຶນປູກກ້ວຍຫອມ ທີ່ບໍ່ມີເອກະສານທີ່ຖືກຕ້ອງຕາມລະບຽບກົດໝາຍເປັນຕົ້ນແມ່ນ: ໃບອະນຸຍາດລົງທຶນ, ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດດ້ານກະສິກຳ ແລະ ປ່າໄມ້, ໃບທະບຽນອາກອນ, ໃບຢັ້ງຢືນແຜນຮັບຮອງສິ່ງແວດລ້ອມທຳມະຊາດ-ສັງຄົມ ທີ່ປູກກ້ວຍຫອມໃສ່ເນື້ອທີ່ດິນນາ ແມ່ນໃຫ້ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງເຂັ້ມງວດ ພ້ອມທັງປັບໃໝ ເປັນຈຳນວນເງິນ **50.000.000** ກີບ (ຫ້າສິບລ້ານກີບ) ຕໍ່ໜຶ່ງເຮັກຕາ ຕາມຂໍ້ຕົກລົງຂອງເຈົ້າແຂວງສະບັບເລກທີ1831/ຈຂ.ບກ, ລົງວັນທີ12/11/2015 ໃນມາດຕາ III ພ້ອມສ້າງບົດບັນທຶກກ່າວເຕືອນ, ພາຍຫຼັງເກັບກູ້ຜົນລະປູກຂອງປີນັ້ນແລ້ວໃຫ້ລົບລ້າງເນື້ອທີ່ປູກກ້ວຍ ແລະ ຟື້ນຟູເນື້ອທີ່ດິນນາເພື່ອປູກເຂົ້າຄືນ.

**ມາດຕາ2** ພະນັກງານ, ອຳນາດການປົກຄອງບ້ານ, ຜູ້ທີ່ເປັນນາຍໜ້າຍັງສືບຕໍ່ໂຄສະນາ, ສົມທົບກັບຜູ້ທີ່ໄດ້ຮັບການນຳໃຊ້ທີ່ດິນຍັງສືບຕໍ່ລະເມີດຂໍ້ຕົກລົງ, ຄຳສັ່ງຂອງເຈົ້າແຂວງ, ລະບຽບກົດໝາຍ, ຄຳສັ່ງຂອງລັດຖະບານແມ່ນ: ຄັ້ງທີໜຶ່ງໃຫ້ສຶກສາອົບຮົມສ້າງບົດບັນທຶກ, ຄັ້ງທີສອງໃຫ້ຂຽນບົດສຳຫຼວດ, ຄັ້ງທີສາມໄລ່ອອກຈາກການຈັດຕັ້ງ ພ້ອມທັງດຳເນີນຄະດີທາງແພ່ງ ແລະ ອາຍາຕາມການກະທຳຜິດ.

**ມາດຕາ3** ໃຫ້ຄະນະສະເພາະກິດທີ່ຖືກແຕ່ງຕັ້ງ ອອກແຈ້ງການເຊີນບັນດາບໍລິສັດ, ວິສາຫະກິດ ແລະ ບຸກຄົນທີ່ດຳເນີນການປູກກ້ວຍຫອມບໍ່ຖືກຕ້ອງເຂົ້າມາພົບເພື່ອປະຕິບັດມາດຕະການຕາມຂໍ້ຕົກລົງສະບັບນີ້ ໂດຍອີງຂໍ້ມູນຄວາມເປັນຈິງທີ່ຄະນະຮັບຜິດຊອບ ກໍ່ຄື ພະແນກກະສິກຳ-ປ່າໄມ້, ພະແນກຊັບພະຍາກອນທຳມະຊາດ-ສິ່ງແວດລ້ອມໄດ້ລົງເກັບກຳຂໍ້ມູນໄລຍະຜ່ານມາ.

- ຖ້າຫາກບໍລິສັດ, ວິສາຫະກິດ ແລະ ບຸກຄົນ ບໍ່ເຂົ້າມາຕາມແຈ້ງເຊີນຂອງຄະນະສະເພາະກິດ ແລະ ບໍ່ໃຫ້ຄວາມຮ່ວມມື ແມ່ນເຫັນດີໃຫ້ໃຊ້ມາດຕະການ ຕັດໄຟຟ້າ ໃນຂອບເຂດຂອງໂຄງການ, ບໍ່ອານຸຍາດໃຫ້ນຳສົ່ງກ້ວຍອອກ, ພ້ອມທັງສ້າງບົດບັນທຶກ ເພື່ອດຳເນີນຕາມລະບຽບ ກົດໝາຍຂອງຂະແໜງການທີ່ກ່ຽວຂ້ອງ.
- ບໍລິສັດ, ວິສາຫະກິດ ແລະ ບຸກຄົນໃດ ທີ່ດຳເນີນທຸລະກິດປູກກ້ວຍ ຫາກແຈ້ງເນື້ອທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ, ຖ້າຄະນະສະເພາະກິດຫາກກວດກາພົບເຫັນ ຈະຖືກປັບໃໝ ຄູນສອງເທື່ອຂອງ ມູນຄ່າການປັບໃໝທີ່ໄດ້ລະບຸໄວ້ໃນຂໍ້ຕົກລົງສະບັບນີ້, ນອກຈາກບັນດາມາດຕະການທີ່ກ່າວມາຂ້າງເທິງແລ້ວໃຫ້ປະຕິບັດຕາມບັນດາກົດໝາຍ, ຂໍ້ຕົກລົງ, ນິຕິກຳຕ່າງໆ ຂອງສູນກາງ ແລະ ແຂວງວາງອອກຢ່າງເຂັ້ມງວດ.

**ມາດຕາ4** ສຳລັບງົບປະມານ ໃນການລົງແກ້ໄຂວຽກງານດັ່ງກ່າວ ແມ່ນເຫັນດີນຳໃຊ້ງົບປະມານບ້ວງເງິນທີ່ໄດ້ຈາກການປັບໃໝ ແຕ່ໃຫ້ຄິດໄລ່ການໃຊ້ຈ່າຍຕາມລະບຽບຂອງກະຊວງການເງິນວາງອອກຢ່າງເຂັ້ມງວດ.

- ສ່ວນລາຍຮັບທີ່ໄດ້ຈາກການປັບໃໝ ພາຍຫຼັງທີ່ໄດ້ລົບຄ່າສິ້ນເປືອງຕ່າງໆ ແລ້ວໃຫ້ຖອກເຂົ້າງົບປະມານຂອງລັດ ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 5** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ເຈົ້າແຂວງ ແຂວງບໍ່ແກ້ວ

ປອ ບົວຄົງ ນາມມະວົງ

ບ່ອນສົ່ງ:
- ຄະນະປະຈຳພັກ, ຄະນະພັກແຂວງ.
- ທົ່ວພະແນກການທີ່ກ່ຽວຂ້ອງ.
- ບັນດາທ່ານເຈົ້າເມືອງທັງ 5 ເມືອງ.
- ຄະນະຮັບຜິດຊອບລົງຕົວຈິງ.